ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມຊັບສິນທາງປັນຍາ

ເລກທີ 1266 /ກຊປ. ອຄ
ນະຄອນຫຼວງວຽງຈັນ, ວັນທີ 15 NOV 2021

# ຂໍ້ຕົກລົງ
## ວ່າດ້ວຍບັນຊີ ປະເພດ ແລະ ຊະນິດ ພັນພືດ
## ທີ່ສາມາດ ຂໍຈົດທະບຽນເປັນພັນພືດໃໝ່

- ອີງຕາມ ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ) ສະບັບເລກທີ 38/ສພຊ, ລົງວັນທີ 15 ພະຈິກ 2017;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 604/ນຍ, ລົງວັນທີ 15 ຕຸລາ 2021 ວ່າດ້ວຍ ການຈັດຕັ້ງການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ;
- ອີງຕາມ ບັນຊີ ຊັບພະຍາກອນທຳມະຊາດທີ່ເປັນຍາ ທີ່ມີທ່າແຮງທາງດ້ານເສດຖະກິດ, ມີການຂຸດຄົ້ນຊະຊາຍ ແລະ ຄວາມສ່ຽງຕໍ່ການສູນພັນ ສະບັບເລກທີ 5083/ກອຢ, ລົງວັນທີ 23 ມິຖຸນາ 2017.

## ຫົວໜ້າກົມຊັບສິນທາງປັນຍາ ຕົກລົງ:

### ມາດຕາ 1. ຈຸດປະສົງ

ການກຳນົດ ບັນຊີ ປະເພດ ແລະ ຊະນິດ ພັນພືດ ທີ່ສາມາດ ຂໍຈົດທະບຽນເປັນພັນພືດໃໝ່ ແລະ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຕາມ ກົດໝາຍວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ) ສະບັບເລກທີ 38/ສພຊ, ລົງວັນທີ 15 ພະຈິກ 2017;

### ມາດຕາ 2. ຂອບເຂດການນຳໃຊ້

ຂໍ້ຕົກລົງ ສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ຜູ້ປະກອບການ ການຈັດຕັ້ງ ທີ່ກ່ຽວຂ້ອງໃນການປົກປ້ອງພັນພືດໃໝ່ ໃນຂອບເຂດທົ່ວປະເທດ.

### ມາດຕາ 3. ບັນຊີ ປະເພດ ແລະ ຊະນິດ ພັນພືດ ທີ່ສາມາດ ຂໍຈົດທະບຽນພັນພືດໃໝ່

ບັນຊີ ປະເພດ ແລະ ຊະນິດ ພັນພືດ ທີ່ສາມາດຂໍຈົດທະບຽນພັນພືດໃໝ່ ມີດັ່ງນີ້:

**I. ປະເພດພືດຢືນຕົ້ນ ແລະ ອະງຸ່ນ.**

**1. ພືດອຸດສາຫະກຳ**

| ລ/ດ | ຊະນິດ | ຊື່ສາກົນ | ຊື່ວິທະຍາສາດ |
|---|---|---|---|
| 1. | ໝາກກາເຟ | Coffee | Coffea Arabica L |
| 2. | ຊາ | Tea | Camelilla sinensis ktze. |
| 3. | ຕົ້ນປາມນ້ຳມັນ | Oil palm | Oil palm |